ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
INEWS ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ສາມອົງການຈັດຕັ້ງມະຫາຊົນ ທຫລ.ຊຂ ເຂົ້າຮ່ວມຂະບວນການອອກແຮງງານອະນາໄມ




ໃນຕອນເຊົ້າຂອງ ວັນທີ 11 ກັນຍາ 2020 ສາມອົງການຈັດຕັ້ງມະຫາຊົນ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ໄດ້ເຂົ້າຮ່ວມຂະບວນການອອກແຮງງານອະນາໄມຕົວເມືອງ ຢູ່ສວນສາທາລະນະອ່າງນໍ້າຫງໍາ ເປັນກຽດນໍາພາຂະບວນການໂດຍ ສະຫາຍ ນາງ ຄໍາໃສ ທິບດາລາ ວ່າການປະທານສະຫະພັນແມ່ຍິງ ແຂວງ ຊຽງຂວາງ, ມີ ສະຫາຍ ນາງ ສິດທິດາ ທິບມູນຕາລີ ຮັກສາການເລຂາຄະນະບໍລິຫານງານຊາວໜຸ່ມແຂວງ ຊຽງຂວາງ, ມີສາມອົງການຈັດຕັ້ງມະຫາຊົນ ຊາວໜຸ່ມ, ແມ່ຍິງ, ກໍາມະບານ ຂອງພະແນກການອ້ອມຂ້າງແຂວງ ທັງພາກລັດ ແລະ ເອກະຊົນ ຕະຫຼອດຮອດພາກສ່ວນທຸລະກິດເຂົ້າຮ່ວມນໍາຢ່າງເປັນຂະບວນການຟົດຟື້ນ.

ຈຸດປະສົງໃນການອອກແຮງງານໃນຄັ້ງນີ້ ເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ 03 ອົງການຈັດ ຕັ້ງມະຫາຊົນ ຂັ້ນແຂວງ ແລະ ກອງປະຊຸມໃຫຍ່ ຄັ້ງທີ VIII ຂອງອົງຄະນະພັກ ແຂວງຊຽງຂວາງ ທີ່ຈະໄຂຂຶ້ນໃນມໍ່ໆນີ້ ແລະ ກໍ່ເພື່ອເຮັດໃຫ້ສະຖານທີ່ອ່າງນໍ້າຫງໍາແຫ່ງນີ້ ມີຄວາມສະອາດສວຍງາມ, ມີຄວາມເປັນ

ລະບຽບຮຽບຮ້ອຍ ທັງຮັບປະກັນເລື່ອງສະພາບສິ່ງແວດລ້ອມ ເພື່ອເຮັດໃຫ້ບຸກຄົນທີ່ມາທ່ອງທ່ຽວ, ມາອອກກຳລັງກາຍຢູ່ສະຖານທີ່ແຫ່ງນີ້ໄດ້ມີສຸຂະພາບແຂງແຮງ.










ການສ້າງຂະບວນການອອກແຮງງານໃນຄັ້ງນີ້ ໄດ້ມີການຈັດແບ່ງເປັນແຕ່ລະລ໋ອກ ເພື່ອໃຫ້ແຕ່ລະພາກສ່ວນຮັບຜິດຊອບ ດ້ວຍການເກັບຂີ້ເຫຍື້ອ, ຖາງປ່າ, ຕັດຫຍ້າໃນເຂດທີ່ຮົກເຮື້ອ ແລະ ລົກຫຍ້າປະດັບປະດາຕົ້ນໄມ້ອ້ອມຮອບສະຖານທີ່ສວນສາທາລະນະອ່າງນ້ຳຫງົ່າໃຫ້ມີຄວາມສະອາດງາມຕາ.



ຫຼັງຈາກນັ້ນ, ຄະນະຮັບຜິດຊອບຈາກ 3 ອົງການຈັດຕັ້ງມະຫາຊົນຂອງແຂວງ ແລະ ອພບຕໄດ້ລົງເກັບມ້ຽນຂີ້ເຫຍື້ອຕາມຈຸດອະນາໄມຕ່າງໆ ໄປຖິ້ມບ່ອນທີ່ກຳນົດໄວ້ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດ ແລະ ຈົບງາມ.

**ຂ່າວ: ສຸກສະຫວັນ ພົມມະວົງ**